ສະຖານເອກອັກຄະລັດຖະທູດ

ສປປ.ລາວ-ວໍຊິງຕັນ, ດີຊີ

# ຂໍ້ແນະນຳ

## ໃນການສະເໜີປ່ຽນໜັງສືຜ່ານແດນ ແລະ ອອກບັດກົງສຸນ (ບັດຂຶ້ນທະບຽນກັບສະຖານທູດ)

**ເອກະສານທີ່ຕ້ອງໄດ້ປະກອບ ແລະ ນຳສົ່ງມີ:**

1. ໜັງສືຜ່ານແດນຫົວເກົ່າຂອງຕົນເອງ
2. ສຳເນົາ ຫຼື Copy ໜັງສືຜ່ານແດນ ທີ່ຕ້ອງການປ່ຽນຫົວໃໝ່ຈຳນວນ 2 ຊຸດ ລາຍລະອຽດຄື: 1./ ໜ້າປົກປຶ້ມໜັງສືຜ່ານແດນ; 2./ ໜ້າທີ່ມີຮູບຂອງທ່ານຢູ່ໃນໜັງສືຜ່ານແດນ; 3./ ໜ້າທີ່ຂຽນຢູ່ໃນໜັງສືຜ່ານແດນວ່າ: **" ກຳນົດຕໍ່ອາຍຸໜັງສືຜ່ານແດນນີ້ ໃຊ້ໄດ້ເຖິງ "** ແລະ ກໍລະນີຖ້າວ່າປຶ້ມໜັງສືຜ່ານແດນຂອງທ່ານເປັນປຶ້ມລຸ້ນເກົ່າອອກໃນຊ່ວງປີ 1990-2003 ໃຫ້ສຳເນົາ ໝົດທຸກໜ້າ.
3. ຮູບຂະໜາດ 2 x 2 In. ຈຳນວນ 4 ໃບ(ຮູບຖ່າຍບໍ່ໃຫ້ເກີນ 6 ເດືອນ ແລະ ນຸ່ງເຄື່ອງສຸພາບ, ຜົມສີດຳ, ພື້ນຜ້າສາກເປັນສີຂາວ, ບໍ່ເອົາຮູບ Scan ຫຼື Copy);
4. Copy ບັດກົງສຸນ (ບັດຂຶ້ນທະບຽນກັບສະຖານທູດ) ຖ້າມີ;
5. Copy ບັດຂຽວ (Permanent Resident) ຖ້າມີ;
6. ຖ້າທ່ານຕ້ອງການ ປ່ຽນນາມສະກຸນ ໃຫ້ Copy ໃບໜັງສືແຕ່ງງານຂອງທ່ານຄັດຕິດມາພ້ອມ;
7. ຖ້າກໍລະນີໜັງສືຜ່ານແດນຂອງທ່ານເສຍຫາຍ ຕ້ອງມີໃບໜັງສືແຈ້ງເສຍຈາກເຈົ້າໜ້າທີ່ ແລະ Copy ໜ້າມີຮູບໜັງສືຜ່ານແດນຂອງທ່ານ ແລ້ວປະກອບຕື່ມໃສ່ຄຳແນະນຳໃນຂໍ້: 1, 4, 5, 6.
8. ຄ່າທຳນຽມ **90 $** (ຕ້ອງຈ່າຍເປັນ **money order or certified check** ເທົ່ານັ້ນ**)** ຖ້າວ່າໜັງສືຜ່ານແດນຂອງທ່ານໝົດກຳນົດການນຳໃຊ້ (Expired) ຈະຖືກປັບໄໝ 10 $ ຕໍ່ປີ(ຈຳນວນປີ ທີ່ຖືກປັບໄໝນັ້ນແມ່ນໃຫ້ທ່ານນັບແຕ່ປີໝົດກຳນົດການນຳໃຊ້ຈົນຮອດປະຈຸບັນ).
9. ຊອງສົ່ງກັບຕ້ອງຕິດສະແຕັມ ແລະ ລົງທະບຽນ ພ້ອມຂຽນທີ່ຢູ່ຂອງທ່ານລະອຽດຄັດຕິດມາພ້ອມ, ເພື່ອສົ່ງໜັງສືຜ່ານແດນຫົວໃໝ່ ກັບຄືນໃຫ້ທ່ານ. (ຖ້າທ່ານ ຫາກນຳໃຊ້ຊ່ອງທີ່ບໍ່ລົງທະບຽນ ແລະ ຕິດສະແຕັມບໍ່ເຕັມລາຄາຕາມລະບຽບຂອງໄປສະນີ, ທາງສະຖານທູດຈະບໍ່ຮັບຜິດຊອບໃນການເສຍຫາຍໜັງສືຜ່ານແດນຂອງທ່ານ).

ຜູ້ຮ້ອງຂໍ ຕ້ອງປະກອບເອກະສານໃຫ້ຖືກຕ້ອງຄົບຖ້ວນ ຂຽນໃຫ້ລະອຽດຈະແຈ້ງ ຕາມຄຳແນະນຳຂ້າງເທິງນີ້, ຖ້າທ່ານປະກອບເອກະສານບໍ່ຄົບຖ້ວນ ທາງສະຖານທູດຈະບໍ່ພິຈາລະນາແກ້ໄຂ.

ທີ່ຢູ່ສະຖານທູດລາວ: Embassy of the Lao P.D.R
2222 S Street, N.W
Washington, DC 20008.

Tel: (202) 332-6416, (202) 328-9148, (202) 328-9239 (202) 667-0076 Extension: 205 or 203
ແຕ່ 9:00 ໂມງ ຫາ 12:00 ໂມງ ວັນຈັນ-ວັນສຸກ ຕອນແລງຈະບໍ່ຮັບໂທລະສັບ.
(ເວລາຢູ່ນະຄອນຫຼວງວໍຊິງຕັນ, ດີຊີ. ສະຫະລັດອາເມລິກາ)

Fax: (202) 332-4923